# ບົດຮຽນທີ 10: ການກັບໃຈ ແລະ ການໃຫ້ອະໄພ

*ຂໍ້ຄວນຈຳ*

*"ຖ້າພວກເຮົາສາລະພາບບາບທັງຫຼາຍຂອງພວກເຮົາ, ພຣະອົງສັດຊື່ ແລະ ທ່ຽງທຳຈະອະໄພບາບຂອງພວກເຮົາ ແລະ ຊຳລະພວກເຮົາໃຫ້ພົ້ນຈາກຄວາມອະທຳທັງໝົດ"*

*(1 ໂຢຮັນ 1:9, NKJV).*

1. **ການກັບໃຈທີ່ແທ້ຈິງ** ບໍ່ແມ່ນຍ້ອນ **ຄວາມຢ້ານ**. ທ່ານຄິດວ່າ **ການເສຍໃຈຍ້ອນ ຢ້ານຖືກລົງໂທດ** ກັບ **ການເສຍໃຈຍ້ອນ ເຮັດໃຫ້ພຣະເຈົ້າເສຍໃຈ** ແຕກຕ່າງກັນແນວໃດ? ແລະ ແບບໃດຄື ການກັບໃຈທີ່ມາຈາກໃຈ ແທ້ໆ? ໂຣມ 2:4 ແລະ ພສສ 51: 1-11.
2. **ບາງຄົນຮູ້ສຶກລະອາຍໃຈທີ່ເຮັດບາບເລື້ອຍໆ** ຈົນຄິດວ່າ **ຕົນເອງ** ບໍ່ຄູ່ຄວນ **ທີ່ຈະຂໍການອະໄພອີກ**. ຈາກພຣະສັນຍາໃນ **1 ໂຢຮັນ 1:9 ແລະ ພສສ 103:8**, ທ່ານຈະ**ມີວິທີໜູນໃຈຄົນ**ທີ່ຕິດຢູ່ໃນຄວາມຮູ້ສຶກຜິດນີ້ແນວໃດ ເພື່ອໃຫ້ພວກເຂົາ**ກ້າກັບຄືນມາຫາພຣະເຈົ້າ**?
3. ອີງຕາມ ກິດຈະການ 3:19, **ການກັບໃຈໃໝ່ຄືການ ຫັນຫຼັງໃຫ້ບາບ**. ທ່ານຄິດວ່າ **ຜົນ**ຂອງການ**ຫັນຫຼັງໃຫ້ບາບ**ນັ້ນຈະສະແດງອອກມາໃຫ້ຄົນຮອບຕົວເຫັນໄດ້ແນວໃດໃນຊີວິດປະຈຳວັນ? ມີການປ່ຽນແປງອັນໃດໃນຊີວິດຂອງທ່ານທີ່ທ່ານຮູ້ສຶກພູມໃຈທີ່ສຸດ ຫຼັງຈາກທີ່ໄດ້ເລືອກເດີນຕາມພຣະເຈົ້າ?"